ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ 116 /ທຄຕລ.2017

ນະຄອນຫຼວງວຽງຈັນ, ວັນທີ 19 MAY 2017

# ແຈ້ງການ

ຮຽນ: ທ່ານ ຜູ້ຖືຮຸ້ນ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລື່ອງ: ການເປີດເຜີຍຂໍ້ມູນບົດລາຍງານການເງິນແບບສັງລວມກິດຈະການຂອງ ທຄຕລ ປະຈຳປີ 2016 ແລະ ປະຈຳໄຕມາດ 01/2017.

- ອີງຕາມລະບຽບການວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ເລກທີ 007/ຄຄຊ ລົງວັນທີ 3/4/2014.
- ອີງຕາມລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ22/LSX ລົງວັນທີ 7/1/2011.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງມາຍັງທ່ານຜູ້ຖືຮຸ້ນຊາບວ່າ ທຄຕລ ໄດ້ເປີດເຜີຍຂໍ້ມູນເອກະສານລາຍງານການເງິນແບບແຍກກິດຈະການປະຈຳປີ 2016 ແລະ ປະຈຳໄຕມາດ 01/2017 ຜ່ານຊ່ອງທາງລະບົບເປີດເຜີຍຂໍ້ມູນຂອງຕະຫລາດຫຼັກຊັບລາວແລ້ວ. ສ່ວນເອກະສານລາຍງານການເງິນແບບສັງລວມກິດຈະການຂອງ ທຄຕລ ປະຈຳປີ 2016 ແລະ ປະຈຳໄຕມາດ 01/2017, ທຄຕລ ຍັງບໍ່ທັນສາມາດເປີດເຜີຍໄດ້ເທື່ອ, ສາເຫດເນື່ອງຈາກວ່າເອກະສານລາຍງານການເງິນແບບສັງລວມກິດຈະການ ຕ້ອງປະກອບດ້ວຍຂໍ້ມູນຂອງບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ ຂອງ ທຄຕລ ເຂົ້ານຳ, ແຕ່ມາຮອດປັດຈຸບັນເອກະສານລາຍງານການເງິນປະຈຳປີ 2016 ຂອງບໍລິສັດຮ່ວມທຶນບາງພາກສ່ວນຍັງບໍ່ທັນສຳເລັດ. ຕໍ່ກັບບັນຫາດັ່ງກ່າວ, ທຄຕລ ຈະເລັ່ງທວງແລະ ອອກເອກະສານລາຍງານການເງິນແບບສັງລວມກິດຈະການໃຫ້ສຳເລັດ ແລະ ຈະເປີດເຜີຍຂໍ້ມູນດັ່ງກ່າວໃຫ້ຜູ້ຖືຮຸ້ນໄດ້ຮັບຊາບໂດຍໄວ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ຂໍອະໄພມານະທີ່ນີ້ດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

ຮ. ຜູ້ອຳນວຍການໃຫຍ່

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ພັນຊະນະ ຄູນນຸວົງ